ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 1599/ກປ
ນະຄອນຫຼວງວຽງຈັນ, ວັນທີ 16 JUL 2020

ຂໍ້ຕົກລົງ
ວ່າດ້ວຍການແຕ່ງຕັ້ງຄະນະກອງເລຂາ ຄະນະກຳມະການແຫ່ງຊາດເພື່ອສົ່ງເສີມກາເຟລາວ ຂັ້ນສູນກາງ

- ອີງຕາມ ດຳລັດ ຂອງ ນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບ ເລກທີ 99/ນຍ, ລົງວັນທີ 9/3/2017.
- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີວ່າດ້ວຍການແຕ່ງຕັ້ງຄະນະກຳມະການແຫ່ງຊາດເພື່ອສົ່ງເສີມກາເຟລາວ ສະບັບເລກທີ 23/ນຍ, ລົງວັນທີ 09/04/2018.
- ອີງຕາມ ການສະເໜີຂອງຫ້ອງການກະຊວງກະສິກຳ ແລະ ປ່າໄມ້ ຄັ້ງວັນທີ 13/7/2020.

ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງຕົກລົງ:

ມາດຕາ 1. ແຕ່ງຕັ້ງຄະນະກອງເລຂາ ຄະນະກຳມະການແຫ່ງຊາດເພື່ອສົ່ງເສີມກາເຟລາວ (ຄສກ) ຂັ້ນສູນກາງ ດັ່ງມີລາຍຊື່ລຸ່ມນີ້:

1.	ທ່ານ ຈັນທາ ທິບພະວົງພັນ, ຫົວໜ້າກົມປູກຝັງ, ກປ	ເປັນຫົວໜ້າ
2.	ທ່ານ ປອ. ສຸລະພອນ ອິນທະວົງ, ຮອງຫົວໜ້າກົມປູກຝັງ, ກປ	ເປັນຮອງ (ທັງເປັນຜູ້ປະຈຳການ)
3.	ທ່ານ ຮອງຫົວໜ້າກົມສົ່ງເສີມການຄ້າ, ກະຊວງ ອຄ	ເປັນຮອງ
4.	ທ່ານ ຫົວໜ້າກົມບໍລິການ, ທະນາຄານແຫ່ງ ສປປລາວ	ເປັນຄະນະ
5.	ທ່ານ ຮອງຫົວໜ້າກົມນະໂຍບາຍການເງິນ ແລະ ນິຕິກຳ, ກະຊວງ ກງ	ເປັນຄະນະ
6.	ທ່ານ ປອ ພົມມີ ອິນທີຈັກ, ຮອງຫົວໜ້າກົມແຜນການ ແລະ ການເງິນ, ກປ	ເປັນຄະນະ
7.	ທ່ານ ທິບພະວົງ ອຸ່ນຫຼ້າ, ຮອງຫົວໜ້າກົມນະໂຍບາຍ ແລະ ນິຕິກຳ, ກປ	ເປັນຄະນະ
8.	ທ່ານ ສົມບູນ ເລັ່ງສະຫວັດ ຮອງຫົວໜ້າກົມພັດທະນາຊົນນະບົດ ແລະ ສະຫະກອນ, ກປ	ເປັນຄະນະ
9.	ທ່ານ ທອງສະຫວັນ ພັນທະລາວົງ, ຮອງຫົວໜ້າກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳ, ກປ	ເປັນຄະນະ
10.	ທ່ານ ປອ. ທັດເທວາ ສະພັງທອງ, ຮອງຫົວໜ້າກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ, ກປ	ເປັນຄະນະ
11.	ທ່ານ ປອ ຈັນສະໝອນ ພິງອຸດົມ ຮອງຫົວໜ້າສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະ ບົດ, ກປ	ເປັນຄະນະ
12.	ທ່ານ ຮອງຫົວໜ້າກົມນຳເຂົ້າ ແລະ ສົ່ງອອກ, ກະຊວງ ອຄ	ເປັນຄະນະ
13.	ທ່ານ ນາງ ບຸນເຮືອງ ລິດດັ່ງ, ປະທານສະມາຄົມກາເຟລາວ	ເປັນຄະນະ
14.	ທ່ານ ພູໄຊ ເທບພະວົງ, ເລຂາທິການສະພາການຄ້າ ແລະ ອຸດສະຫາກຳ ແຫ່ງ ຊາດລາວ	ເປັນຄະນະ

ມາດຕາ 2. ກອງເລຂາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ຜັນຂະຫຍາຍແຜນຍຸດທະສາດກາເຟລາວ ແລະ ສ້າງແຜນດຳເນີນງານຂອງຄະນະກຳມະການແຫ່ງຊາດເພື່ອສົ່ງເສີມກາເຟລາວ.
2. ປະສານສົມທົບກັບກອງເລຂາ ຄະນະກຳມະການຂັ້ນແຂວງ ເພື່ອສົ່ງເສີມກາເຟລາວ ໃນການໂຄສະນາເຜີຍແຜ່, ແນະນຳ, ຊຸກຍູ້, ຕິດຕາມ, ກວດກາ ແລະ ໃຫ້ຄຳແນະນຳຕໍ່ສະມາຄົມ, ສະຫາກອນ, ກຸ່ມຜະລິດ ແລະ ຄອບຄົວຜູ້ຜະລິດ ກ່ຽວກັບ ການພັດທະນາ ແລະ ສົ່ງເສີມກາເຟລາວ.
3. ປະສານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງ, ສະຖາບັນການເງິນ, ອົງການຈັດຕັ້ງກາເຟ ໃນພາກພື້ນ ແລະ ສາກົນ ແລະ ຄູ່ຮ່ວມພັດທະນາ ເພື່ອຍາດແຍ່ງທຶນຮອນ, ເຕັກນິກວິຊາການ, ເຕັກໂນໂລຊີ ແລະ ປົດຮຽນ ເພື່ອນຳມາພັດທະນາ ແລະ ສົ່ງເສີມກາເຟລາວ.
4. ສະເໜີ ອຳນາດການປົກຄອງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຂັ້ນທ້ອງຖິ່ນ ເພື່ອຄົ້ນຄວ້າ ຫຼື ປັບປຸງ ລະບຽບການ, ກົນໄກ ຄຸ້ມຄອງ ແລະ ການແກ້ໄຂບັນຫາ ການພັດທະນາການຜະລິດ, ການປຸງແຕ່ງ, ການຄ້າຂາຍ, ການສົ່ງອອກ ແລະ ການບໍລິໂພກກາເຟລາວ.
5. ສະຫລຸບລາຍງານ ສະພາບການຊີ້ນຳນຳພາ ແລະ ຜັນຂະຫຍາຍຈັດຕັ້ງປະຕິບັດ ແຜນຍຸດທະສາດສົ່ງເສີມກາເຟລາວ ຮອດປີ 2025 ຂອງຄະນະກຳມະການແຫ່ງຊາດ.
6. ສ້າງແຜນດຳເນີນງານ ແລະ ແຜນງົບປະມານ ຂອງຄະນະກຳມະການແຫ່ງຊາດ ເພື່ອສົ່ງເສີມກາເຟລາວ ແລະ ກອງເລຂາ.
7. ເຂົ້າຮ່ວມກອງປະຊຸມພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ ຂອງຄະນະກຳມະການແຫ່ງຊາດ ເພື່ອສົ່ງເສີມກາເຟລາວ.
8. ຈັດກອງປະຊຸມກອງເລຂາ ຂັ້ນສູນກາງ ຄະນະກຳມະການແຫ່ງຊາດ ເພື່ອສົ່ງເສີມກາເຟລາວ.
9. ຮັບຜິດຊອບຈັດກອງປະຊຸມສະຫຼຸບຕີລາຄາ ວຽກງານສົ່ງເສີມການຜະລິດ ແລະ ພັດທະນາກາເຟລາວ ຕາມການຊີ້ນຳຂອງຄະນະກຳມະການແຫ່ງຊາດ ເພື່ອສົ່ງເສີມກາເຟລາວ.
10. ຮັບຜິດຊອບຈັດກອງປະຊຸມຄົບຄະນະ ສະໄໝສາມັນ ແລະ ວິສາມັນ ຂອງຄະນະກຳມະການແຫ່ງຊາດ ເພື່ອສົ່ງເສີມກາເຟລາວ ແລະ ນຳເອົາມະຕິ ຂອງກອງປະຊຸມດັ່ງກ່າວໄປຜັນຂະຫຍາຍຈັດຕັ້ງປະຕິບັດ.
11. ຖ້າມີຄວາມຈຳເປັນ, ສາມາດນຳໃຊ້ກອງເລຂາໂຄງການສົ່ງເສີມການຜະລິດເປັນສິນຄ້າ ແລະ ໂຄງການຄ້ຳປະກັນຄວາມໝັ້ນຄົງດ້ານສະບຽງອາຫານແຫ່ງຊາດ. ພ້ອມດຽວກັນນັ້ນ, ກໍ່ມີສິດແຕ່ງຕັ້ງພະນັກງານວິຊາການຊ່ວຍວຽກເພີ່ມເຕີມ ໃນຂະແໜງການຂອງຕົນ ຕາມຄວາມເໝາະສົມ.
12. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ ຂອງຄະນະກຳມະການແຫ່ງຊາດ ເພື່ອສົ່ງເສີມກາເຟລາວ.

ມາດຕາ 3. ຄວາມຮັບຜິດຊອບ ຂອງກອງເລຂາ ຕາມຂະແໜງການທີ່ກ່ຽວຂ້ອງ

1. **ຂະແໜງກະສິກຳ ແລະ ປ່າໄມ້ :**
   - ສົ່ງເສີມ ເຕັກນິກວິຊາການ ກ່ຽວກັບ ການປູກ, ແນວພັນ, ການປ້ອງກັນພືດ, ການເກັບກ່ຽວ, ວິທະຍາການຫຼັງການເກັບກ່ຽວ, ການກຳນົດເຂດການຜະລິດ ແລະ ການປັບປຸງດິນ.
   - ຄົ້ນຄ້ວາທົດລອງ ແລະ ສົ່ງເສີມການຜະລິດ ແລະ ການພັດທະນາແນວພັນ, ເຕັກນິກການຜະລິດແບບຍືນຍົງ, ພ້ອມທັງ ຝຶກອົບຮົມ ໂຄສະນາ ເຜີຍແຜ່ຜົນໄດ້ຮັບອອກສູ່ວົງກວ້າງໃນກຸ່ມຜູ້ຜະລິດ.
   - ສົ່ງເສີມການຈັດຕັ້ງກຸ່ມການຜະລິດ, ສະມາຄົມ, ສະຫະກອນການຜະລິດ ແລະ ຜູ້ປະກອບການ ໃຫ້ມີຄວາມເຂັ້ມແຂງ ທັງດ້ານປະລິມານ ແລະ ຄຸນນະພາບ.
   - ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄຸ້ມຄອງ ແລະ ພັດທະນາມາດຕະຖານຄຸນນະພາບ ຂອງກາເຟລາວ ຕາມທິດກະສິກຳສະອາດ ສີຂຽວ ແລະ ຍືນຍົງ. ສາມາດສ້າງລາຍຮັບທີ່ດີ ໝັ້ນຄົງ ແກ່ຜູ້ຜະລິດ ແລະ ຜູ້ປະກອບການກາເຟ.

   - ສ້າງແຜນດຳເນີນງານ ແລະ ແຜນງົບປະມານ ຂອງ ຄະນະກຳມະການແຫ່ງຊາດ ເພື່ອສົ່ງເສີມກາເຟ ລາວ ແລະ ກອງເລຂາ.

- ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ແຜນຍຸດທະສາດສົ່ງເສີມກາເຟລາວ ຮອດປີ 2025 ຢ່າງເປັນປົກກະຕິຕໍ່ເນື່ອງ, ສະຫຼຸບລາຍງານໃຫ້ ຄະນະກ□າມະການແຫ່ງຊາດກາເຟລາວ.

2. ຂະແໜງອຸດສາຫະກຳ ແລະ ການຄ້າ :

- ສົ່ງເສີມ ແລະ ພັດທະນາ ການປຸງແຕ່ງ, ຫຸ້ມຫໍ່ ແລະ ໂຄສະນາສິນຄ້າ ໃຫ້ເປັນລະບົບ ແລະ ຕໍ່ເນື່ອງ;
- ສົ່ງເສີມການພັດທະນາ ເຄື່ອງໝາຍ (ຫຍີ່ຫໍ້) ສິນຄ້າກາເຟຂອງລາວ, ສ້າງມາດຕະຖານສິນຄ້າ ເພື່ອສ້າງມູນຄ່າເພີ່ມ ແລະ ສ້າງຄວາມເຊື່ອໝັ້ນແກ່ຜູ້ບໍລິໂພກ ທັງພາຍໃນ ແລະ ຕ່າງປະເທດ;
- ກຳນົດນະໂຍບາຍສົ່ງເສີມກາເຟ ໃຫ້ເປັນສິນຄ້າຍຸດທະສາດສຳລັບການສົ່ງອອກ ແລະ ການປຸງແຕ່ງ ເພື່ອກະຕຸ້ນການພັດທະນາສິນຄ້າ ແລະ ການປຸງແຕ່ງ ໃຫ້ໄດ້ມາດຕະຖານສາກົນ ຕາມທີ່ຕະຫຼາດຕ້ອງການ.
- ຄຸ້ມຄອງ ການສົ່ງອອກ ແລະ ນຳເຂົ້າ ພະລິດຕະພັນກາເຟ ແລະ ພະລິດຕະພັນອື່ນທີ່ຕິດພັນ ເພື່ອເປັນການຊຸກຍູ້ສົ່ງເສີມການພັດທະນາສິນຄ້າພາຍໃນ.
- ປະສານສົມທົບ ກັບອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ, ເພື່ອຄຸ້ມຄອງ ຜູ້ປະກອບການ, ໂຮງງານປຸງແຕ່ງ, ຫ້ອໜ່ວຍທຸລະກິດ ທີ່ດຳເນີນການຊື້-ຂາຍກາເຟ ໃຫ້ຖືກຕ້ອງຕາມລະບຽບການ ແລະ ກົດໝາຍກ່ຽວຂ້ອງ. ຄົ້ນຄ້ວາ ແລະ ອອກລະບຽບການ ເກັບຊີ້ພາຍໃນ, ການສົ່ງອອກ ໃຫ້ແທດເໝາະກັບສະພາບຕົວຈິງຕາມ ນະໂຍບາຍສົ່ງເສີມການຄ້າ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ;
- ປະສານສົມທົບ ກັບສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດ, ແລະ ພາກສ່ວນກ່ຽວຂ້ອງ ເພື່ອປັບປຸງພາລະບົດບາດການເຄື່ອນໄຫວ ຂອງສະມາຄົມກາເຟລາວ ໃນການຄຸ້ມຄອງ ຜູ້ປະກອບການ, ຜູ້ຜະລິດ, ຜູ້ປຸງແຕ່ງ, ຜູ້ຄ້າຂາຍກາເຟ ໃນຂອບເຂດທົ່ວປະເທດ ແລະ ພັດທະນາ ໃຫ້ກາຍເປັນອົງການຈັດຕັ້ງທີ່ເຂັ້ມແຂງ.
- ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ກະກຽມບັນດາເງື່ອນໄຂດ້ານລະບຽບການ, ບຸກຄະລາກອນ ແລະ ງົບປະມານ ເພື່ອກຽມເຂົ້າເປັນສະມາຊິກ ຂອງອົງການກາເຟໂລກ.

3. ຂະແໜງການເງິນ :

- ຄົ້ນຄ້ວາ ແລະ ກຳນົດນະໂຍບາຍ ແລະ ລະບຽບການ ໃນການເກັບພັນທະພາສີ-ອາກອນ ແລະ ຄ່າບໍລິການຕ່າງໆທີ່ກ່ຽວຂ້ອງກັບທຸລະກິດກາເຟ;
- ກວດກາຄືນການເກັບຄ່າທຳນຽມ, ຄ່າບໍລິການ, ຄ່າການເຄື່ອນຍ້າຍກາເຟ ລະຫວ່າງແຂວງໃຫ້ສອດຄ່ອງ ກັບກົດໝາຍ ແລະ ລະບຽບການໃນປະຈຸບັນ ແລະ ເປັນເອກະພາບກັນ ໃນການຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ.

4. ທະນາຄານແຫ່ງ ສປປ ລາວ :

- ກຳນົດນະໂຍບາຍສະໜອງສິນເຊື່ອ, ອັດຕາດອກເບ້ຍທີ່ເໝາະສົມ ເພື່ອສົ່ງເສີມ ການຜະລິດ ແລະ ທຸລະກິດກາເຟ ໃຫ້ສອດຄ່ອງກັບ ນະໂຍບາຍສົ່ງເສີມການຜະລິດເປັນສິນຄ້າ ທີ່ລັດຖະບານວາງອອກ.
- ຄົ້ນຄວ້າມາດຕະການ ແກ້ໄຂບັນຫາດ້ານສິນເຊື່ອ ໃຫ້ແກ່ຜູ້ປະກອບການ ທີ່ເຮັດທຸລະກິດເກັບຊື້ກາເຟ ກັບປະຊາຊົນ ມາປຸງແຕ່ງ ແລະ ສົ່ງອອກ ໃນກໍລະນີ ມີສັນຍາຊື້ຂາຍຖືກຕ້ອງ ທີ່ໄດ້ຮັບການຢັ້ງຢືນ ຈາກຂະແໜງອຸດສະຫະກຳ ແລະ ການຄ້າ ແລະ ອົງການປົກຄອງທ້ອງຖິ່ນກ່ຽວຂ້ອງ, ພ້ອມທັງພິຈາລະນາຕອບສະໜອງສິນເຊື່ອ ໃຫ້ແກ່ກຸ່ມຜູ້ຜະລິດກາເຟ ໃຫ້ແທດເໝາະກັບສະພາບຄວາມເປັນຈິງ.

5. ສະມາຄົມກາເຟລາວ; ສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດລາວ :

- ຂົນຂວາຍ, ເຕົ້າໂຮມ ຫ້ອໜ່ວຍທຸລະກິດກາເຟທັງພາກລັດ ແລະ ເອກະຊົນ, ການຈັດຕັ້ງການຜະລິດ ເພື່ອເຮັດວຽກຮ່ວມກັນ ໃນການພັດທະນາວຽກງານກາເຟ ຕາມແຜນຍຸດທະສາດສົ່ງເສີມກາເຟລາວ ຮອດປີ 2025.

- ສົ່ງເສີມ ແລະ ອຳນວຍຄວາມສະດວກ ດ້ານລະບຽບການ ກ່ຽວກັບການເຮັດທຸລະກິດກາເຟ ພາຍໃນປະເທດ ແລະ ລະບຽບການ ກ່ຽວກັບການສົ່ງອອກກາເຟ.
- ຄົ້ນຄວ້າພິຈາລະນາ ການປັບປຸງພາລະບົດບາດຂອງສະມາຄົມກາເຟລາວ ໃຫ້ກາຍເປັນອົງການຈັດຕັ້ງລະດັບຊາດທີ່ເຂັ້ມແຂງ, ທັງເປັນໃຈກາງ ປະສານງານ ແລະ ຕິດຕາມປະເມີນຜົນ ການຈັດຕັ້ງປະຕິບັດ ແຜນຍຸດທະສາດສົ່ງເສີມກາເຟລາວ ຮອດປີ 2025.
- ສະມາຄົມກາເຟລາວຍັງເຮັດໜ້າທີ່ ເປັນເສນາທິການ ດ້ານວຽກງານກາເຟ ໃຫ້ແກ່ ຄສກ ກໍຄືລັດຖະບານ.

ມາດຕາ 4. ມອບໃຫ້ກົມປຸກຝັງ, ທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ບັນດາທ່ານທີ່ໄດ້ຮັບການແຕ່ງຕັ້ງ ຕາມມາດຕາ 1 ຈົ່ງຮັບຮູ້ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງປະຕິບັດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ແລະ ມາດຕາ 3 ໃນຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

ມາດຕາ 5. ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 0459/ກປ, ລົງວັນທີ 21/03/2019 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້
(ປະທານຄະນະກຳມະການແຫ່ງຊາດເພື່ອສົ່ງເສີມກາເຟລາວ)

ປອ.ລຽນ ທີແກ້ວ

ບ່ອນນຳສົ່ງ:
- ທ່ານລັດຖະມົນຕີ, ຮອງລັດຖະມົນຕີ 4 ສະບັບ
- ຫ້ອງວ່າການ ຫສນຍ 1 ສະບັບ
- ກົມຈັດຕັ້ງ ແລະ ພະນັກງານ 1 ສະບັບ
- ກົມປຸກຝັງ 1 ສະບັບ
- ສະມາຊິກ ຄສກ ທ່ານລະ 1 ສະບັບ
- ພາກສ່ວນກ່ຽວຂ້ອງ ບ່ອນລະ 1 ສະບັບ
- ທ່ານທີ່ຖືກແຕ່ງຕັ້ງທ່ານລະ 1 ສະບັບ
- ເກັບມ້ຽນ 1 ສະບັບ